Weekly news update from 22-26 January 2018 about land and natural resource issues in Laos.
Summarized by LIWG Communication Officer.

……

ສະຫຼຸບຂ່າວປະຈຳອາທິດລະຫວ່າງວັນທີ 22-26ມັງກອນ 2018 ກ່ຽວກັບປະເດັນທີ່ດິນແລະຊັບພະຍາກອນທຳມະຊາດໃນປະເທດລາວ.
ສັງລວມໂດຍ ທີມງານສື່ສານ ກອງເລຂາ LIWG.

## English news

**NA President calls on judiciary to tackle laxity within its ranks: Vientiane Times**

*23 January 2018*

Lack of strong leadership, measures and inspection methods, combined with poor coordination, are causing incompetency in the justice sector, leading to an increase in violations of the law over the past year.

A lack of inspection mechanisms as well as inspections carried out by higher authorities of their subordinate organisations and individuals to monitor their work, together with disorganised inspections at all levels, also caused deficiencies in the work of the justice sector.

More than 21,000 prosecutions took place in 2017 (5,660 civil cases and 1,569 criminal cases), a 12.5 percent increase on 2016.

Ms.Pany called for checks on final decisions made by the courts at every level, saying decisions that were incorrect must be returned to the prosecutor for reconsideration. Judges who made incorrect decisions should be investigated and penalised appropriately.

**City road awaits green light for completion: Vientiane Times**

*24 January 2018*

A contractor hopes to soon sign the third agreement for construction of the 11-km road running from Donnokkhoum village in Sisattanak district to the 450 Year Road in Xaysettha district. A contractor was waiting for the government to sign an agreement that would allow work on the road to continue. The initial 36-month contract was signed in July 2012. Authorisation was renewed until July 2017 but not much progress was made.

The project was delayed because the contractor ran out of money and some people in the area created an obstruction when the company and land owners could not agree on the amount of compensation to be paid at certain points along the road, according to the project director.

**Civil Society Groups in Laos Delayed Funding, Forced to Disband Under New Law: RFA**

*24 January 2018*

A recently introduced law regulating civil society organizations (CSOs) in Laos has further restricted their work, according to sources in the sector, who said groups now face lengthy delays in funding, while others are being forced to operate as small businesses or shut down completely.

In August last year, the government of Laos issued the New Decree on Associations No. 238 of 2017 to replace the Decree on Associations No. 115 of 2009.

Among the restrictions in the new decree are articles requiring the government to approve the establishment of CSOs; green light their projects and acceptance of donations; review their assets; and provide advice and assistance to ensure their operations are in line with party policy, the law, and government regulations.

*Read article about news decree on Association: Govt Seeks better regulation of association.*

## Govt pushing to realise cooperation projects with Vietnam, China: Vientiane Times

*January 25, 2018*

The government cabinet has demanded action to realise cooperation projects with Vietnam and China in order to ensure fruitful achievements in bilateral cooperation with these countries.

Several cooperation documents are expected to be signed during the 40th annual meeting, including deals on electricity trade, with Laos seeking to export power to Vietnam, a source from the Laos-Vietnam Cooperation Committee said.

In addition, the cabinet meeting was briefed on the implementation of cooperation projects between Laos and China. The meeting discussed a list of projects for which financial assistance would be proposed under a grant provided by the government of China.

China agreed to provide a grant of 4 billion yuan (5,011 billion kip) during a state visit to Laos by President Xi Jinping on November 13-14 last year.

## Nam Ngiep 1 Construction to Be Completed This Year: KPL

*23 January 2018*

The construction of the Nam Ngiep 1 Hydropower Project in Borikhan district, Borikhamxay Province, the Lao PDR is expected to be substantially completed this year, with commissioning tests scheduled for the end of 2018.

The construction of the 230 KV transmission line from the NNP1 Project to the Nabong Substation in Pakngum district, Vientiane Capital, where the 230 KV electricity is upgraded to 500 KV for transfer across the Mekong River to Thailand, is expected to be completed in May 2018.

The resettlement of approximately 520 households in Bolikhamxay and Xaysomboun Provinces that is a critical part to impounding of water in the main reservoir in May 2018 is expected to be completed in April 2018. Out of total 479 households who needed to be relocated from Hom district in Xaysomboun Province, approximately 402 households have already relocated.

## Nomination of Hin Nam No as Laos' First Transboundary World Heritage Gets Into Gear: KPL

*26 January 2018*

The nomination of Hin Nam No National Protected Area as Laos' first natural UNESCO World Heritage site gets into gear as vice ministers met in Khammouane Province to endorse the nomination and management work plans for 2018 on Friday.

"Becoming a World Heritage Site will also enhance the protection of the area, improve conservation and will facilitate better management of the natural resources in and around Hin Nam No, promote ecotourism and scientific research."

Hin Nam No is believed to have so-called "outstanding universal value", adding to or complementing the conservation values that have been considered of global importance in Phong Nga Ke Bang by UNESCO.

# ຂ່າວພາສາລາວ

## ດຳຣັດໃໝ່ ຍິ່ງຄວບຄຸມ ພາກປະຊາສັງຄົມ ຫຼາຍຂຶ້ນ: ວິທະຍຸເອເຊຍເສຣີ

*ວັນທີ 22 ມັງກອນ 2018*

ຣັຖບານລາວ ອອກດຳຣັດໃໝ່ ວ່າດ້ວຍ ສມາຄົມ ຊຶ່ງຈະຄວບຄຸມ ແລະ ຈຳກັດ ການເຮັດວຽກ ແລະ ການເຄື່ອນໄຫວ ຂອງສມາຄົມ ໃນລາວ ຫລາຍຂຶ້ນກວ່າເກົ່າ ຍ້ອນມີ ການກຳນົດ ທັງຫລັກການ, ຣະບຽບການ ແລະ ມາຕການ ການເຄື່ອນໄຫວ ແລະ ການເຮັດວຽກ ຂອງສມາຄົມ ໃນລາວ ຢ່າງເຄັ່ງຄັດ, ພ້ອມທັງ ການຮັບເອົາ ຊັບສິນ ແລະ ທຶນ ຈາກພາຍໃນ ແລະ ຕ່າງປະເທດ.

ມາຕຣາ 59 ໄດ້ບົ່ງບອກ ເຖິງການຄຸ້ມຄອງ ສມາຄົມ ຊຶ່ງທາງການລາວ ໄດ້ກຳນົດ ໃຫ້ຣັຖບານ ເປັນຜູ້ຮັບຜິດຊອບ ໂດຍມອບໃຫ້ ຕັ້ງແຕ່ອຳນາດ ການປົກຄອງບ້ານ ໄປຮອດ ອຳນາດບໍຣິຫານ ຂັ້ນກະຊວງ ເປັນຜູ້ປະຕິບັດ ຮວມທັງ ອົງການ ແນວລາວສ້າງຊາດ ເປັນຜູ້ຕິດຕາມ ຄວບຄຸມ

ດຳຣັດ ວ່າດ້ວຍ ສມາຄົມ ສະບັບໃໝ່ ປີ 2017 ນີ້ ແມ່ນໃຊ້ແທນ ສະບັບ ປີ 2009 ຄື ພາຍຫລັງ ທີ່ໃຊ້ຄວບຄຸມ ແລະ ຈຳກັດການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສມາຄົມນັ້ນ ມາໄດ້ 8 ປີ.

**ບໍ່ຄວນຖືເບົາຕໍ່ກັບການຮັກສາສິ່ງແວດລ້ອມ: ຂ່າວໂດຍລາວພັດທະນາ**

*23 ມັງກອນ 2018*

ພາຍຫຼັງໂຮງງານຕົ້ມກັ່ນນຳມັນກາຊວນຢູ່ບ້ານບໍ່ເຫຼັກ ເມືອງໄຊທານີ ນະຄອນຫຼວງວຽງຈັນ ບໍ່ສາມາດຄວບຄຸມ ແລະ ປະຕິບັດຖືກຕ້ອງຕາມຂະບວນການຜະລິດ ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ທີ່ຢູ່ອາໄສຂອງປະຊາຊົນໃນເຂດໃກ້ຄຽງ. ຕໍ່ບັນຫາດັ່ງກ່າວ ທີ່ຜ່ານມາປະຊາຊົນເຂດນີ້ກໍ່ໄດ້ນຳສະເໜີອຳນາດການປົກຄອງເພື່ອຕັກເຕືອນໃຫ້ຜູ້ເຈົ້າຂອງໂຮງງານປັບປຸງແກ້ໄຂ ແຕ່ກໍບໍ່ໄດ້ຮັບການຮ່ວມມືແຕ່ຢ່າງໃດ ແລະ ຜ່ານມາກໍ່ມີເຈົ້າໜ້າທີ່ກ່ຽວຂ້ອງຂອງເມືອງໄຊທານີລົງໄປກວດກາເບິ່ງລາຍລະອຽດແລ້ວເຖິງ 3 ຄັ້ງ ຕໍ່ຜົນກະທົບຮ້າຍແຮງຂອງໂຮງງານດັ່ງກ່າວ ແຕ່ກໍບໍ່ໄດ້ຮັບການປ່ຽນແປງແຕ່ຢ່າງໃດ ເຊິ່ງທາງພາກສ່ວນທີ່ກ່ຽວຂ້ອງກໍ່ຮູ້ດີວ່າການກະທຳດັ່ງກ່າວ ຂອງໂຮງງານດັ່ງກ່າວແມ່ນຜິດຕໍ່ກົດລະ ບຽບກົດໝາຍຂອງ ສປປລາວ ໂດຍສະເພາະແມ່ນດ້ານສິ່ງແວດລ້ອມແຕ່ເປັນຫຍັງບໍ່ໄດ້ຮັບການແກ້ໄຂ ຫຼື ວ່າເບື້ອງອຳນາດລັດຂອງເຮົາບໍ່ມີຄວາມເຂັ້ມແຂງພໍບໍ? ທີ່ຈະສັ່ງໃຫ້ຜູ້ລະເມີດຍຸດຕິການກະທຳດັ່ງກ່າວ.

**ເຂື່ອນໄຟຟ້ານໍ້າງຽບ 1 ຈະສຳເລັດໃນປີ 2018: ຂ່າວໂດຍລາວພັດທະນາ**

*ວັນທີ 24 ມັງກອນ 2018*

ການກໍ່ສ້າງ ເຂື່ອນໄຟຟ້ານໍ້າງຽບ 1 ທີ່ເມືອງ ບໍລິຄັນ ແຂວງ ບໍລິຄຳໄຊ ຄາດວ່າຈະສຳເລັດເປັນສ່ວນໃຫຍ່ໃນປີ 2018 ໂດຍການທົດລອງຜະລິດໄຟຟ້າຈະມີຂຶ້ນໃນທ້າຍປີ 2018 ແລະ ການຜະລິດໄຟຟ້າທາງການຄ້າຈະເລີ່ມຂຶ້ນໃນຕົ້ນເດືອນກຸມພາ ປີ 2019.
ໃນນັ້ນການກໍ່ສ້າງເຂື່ອນດັດສົມນໍ້າກໍ່ໄດ້ສຳເລັດໃນປີ 2017 ແລະ ການກັກນໍ້າໃນເຂື່ອນດັ່ງກ່າວກໍໄດ້ສຳເລັດລົງໃນເດືອນພຶດສະພາ2017. ສ່ວນການຍົກຍ້າຍປະຊາຊົນປະມານ 520 ຄອບຄົວ ໃນແຂວງບໍລິຄຳໄຊ ແລະ ໄຊສົມບູນ ເຊິ່ງເປັນວຽກງານສຳຄັນສຳລັບການກັກນໍ້າໃນເຂື່ອນໃຫຍ່ ທີ່ຈະເລີ່ມຂຶ້ນໃນເດືອນພຶດສະພາ 2018 ຄາດວ່າຈະສຳເລັດໃນເດືອນເມສາ 2018. ໃນຈຳນວນ 479 ຄົວເຮືອນ, ສຳລັບຢູ່ເມືອງຮົ່ມ ແຂວງໄຊສົມບູນ ມີປະມານ 402 ຄົວເຮືອນ ໄດ້ຮັບການຍົກຍ້າຍເປັນທີ່ຮຽບຮ້ອຍແລ້ວ.
*ອ່ານຂ່າວເພີ່ມກ່ຽວກັບການກໍ່ສ້າງອີກເຂື່ອນໄຟຟ້າໜຶ່ງແຫ່ງ: ເຂື່ອນໄຟຟ້ານໍ້າໄຜ່ຢູ່ແຂວງໄຊສົມບູນ*

**ກະຊວງພະລັງງານ ປະເມີນຄືນໂຄງການລົງທຶນດ້ານບໍ່ແຮ່ ພ້ອມວາງເປົ້າໝາຍຜະລິດແຮ່ທາດໃຫ້ໄດ້ຫຼາຍກວ່າ 10 ພັນຕື້: ຂ່າວໂດຍເສດຖະກິດ-ການຄ້າ**

*25 ມັງກອນ 2018*

ມາຮອດປັດຈຸບັນມີ 649 ບໍລິສັດ, ມີ 909 ກິດຈະການທີ່ພວມດຳເນີນການຂຸດຄົ້ນ, ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ. ການພັດທະນາຂະແໜງບໍ່ແຮ່ ກໍ່ມີຄວາມຫຍຸ້ງຍາກ ແລະ ຂໍ້ຄົງຄ້າງເປັນຕົ້ນ ກ່ອນການພິຈາລະນາອະນຸຍາດລົງທຶນດ້ານບໍ່ແຮ່ ໄດ້ມີການຄົ້ນຄວ້າປະເມີນຜົນປະໂຫຍດລະຫວ່າງລັດຖະບານ ກັບ ຜູ້ລົງທຶນນັ້ນຖືເບົາຕໍ່ວຽກງານສຳຫຼວດເຮັດບໍ່ໄດ້ຕາມມາດຕະຖານການສຳຫຼວດ, ບໍ່ມີວິຊາການທີ່ຊຳນານງານ, ທຶນຮອນຈຳກັດ, ປະສົບການບໍ່ສູງ, ການປະເມີນປະລິມານການສະສົມແຫຼ່ງແຮ່ບໍ່ຊັດເຈນ ແລະ ອື່ນໆ.

**ລາວ ຈະປັບປຸງ ດຳຣັດ ເຂດເສຖກິດ ພິເສດ: ວິທະຍຸເອເຊຍເສຣີ**

*ວັນທີ 25 ມັງກອນ 2018*

ກະຊວງແຜນການ ແລະການລົງທຶນຂອງ ສປປລາວ ຈະປັບປຸງດຳຣັຖວ່າດ້ວຍເຂດເສຖກິດພິເສດ ເພື່ອຄຸ້ມຄອງ ແລະສົ່ງເສີມເຂດດັ່ງກ່າວໃຫ້ມີລັກສນະລວມສູນ ເປັນໄປໃນທິດທາງດຽວກັນ ໃນການຈັດຕັ້ງປະຕິບັດ ແຜນຍຸທສາດການພັທນາ ຍ້ອນວ່າ ດຳຣັຖສະບັບເກົ່າມີບາງເຂດເສຖກິດພິເສດ ໄດ້ນຳໃຊ້ ຣະບຽບກົດໝາຍສະເພາະ ເຮັດໃຫ້ການຄຸ້ມຄອງ ແລະ ການພັທນາຫຍຸ້ງຍາກ.

ດຳຣັຖວ່າດ້ວຍເຂດເສຖກິດພິເສດ ສະບັບປັບປຸງໃໝ່ນີ້ ຈະປ່ຽນແປງໃນເຣື່ອງການແບ່ງຂອບເຂດທີ່ດິນ ໃນເຂດເສຖກິດພິເສດ ໂດຍອີງໃສ່ ເຂດເສຖກິດພິເສດ ສຫວັນ-ເຊໂນ ເປັນແບບຢ່າງ.

ດຳຣັຖສະບັບໃໝ່ທີ່ວ່ານີ້ ຍັງຈະປັບປຸງໜ່ວຍງານ ທີ່ຈະຮັບຜິດຊອບ ເຂດເສຖກິດພິເສດນີ້ນຳດ້ວຍ ໂດຍຈະໃຫ້ ຫ້ອງການສົ່ງເສີມເຂດເສຖກິດພິເສດ ກະຊວງແຜນການ ແລະການລົງທຶນ ເປັນຜູ້ດູແລກວດກາ ແລະຕິດຕາມເຂດເສຖກິດ ທີ່ວ່ານີ້ທຸກແຫ່ງ ຊຶ່ງແຕ່ກ່ອນ ຜູ້ຮັບຜິດຊອບແມ່ນ “ຄະນະກັມການຄຸ້ມຄອງ ເຂດເສຖກິດພິເສດ ແຫ່ງຊາດລາວ” ທີ່ຂຶ້ນກັບຣັຖບາລໂດຍກົງ.

ຮ່າງດຳຣັຖນີ້ ປັດຈຸບັນ ຢູ່ໃນຣະຫວ່າງການຍື່ນ ໃຫ້ຣັຖບາລພິຈາຣະນາ ຊຶ່ງຄາດວ່າຈະປະກາດໃຊ້ ໃນເດືອນ ມີນາ 2018 ນີ້.

**<u>ເລີ່ມກໍ່ສ້າງເຂື່ອນໄຟຟ້ານ້ຳງື່ມ 4 ຢູ່ແຂວງຊຽງຂວາງ</u>: ຂ່າວໂດຍ ເສດຖະກິດ-ສັງຄົມ**

*ວັນທີ 26 ມັງກອນ 2018*

ເຂື່ອນໄຟຟ້ານ້ຳງື່ມ 4 ທີ່ຕັ້ງຢູ່ເມືອງພູກູດ, ແຂວງຊຽງຂວາງໄດ້ເລີ່ມລົງມືກໍ່ສ້າງຫຼ້າສຸດຕອນເຊົ້າຂອງມື້ວານນີ້ ຢູ່ຈຸດທີ່ຈະສ້າງເຂື່ອນດັ່ງກ່າວໄດ້ມີພິທີວາງສີລາລຶກ ເປີດການກໍ່ສ້າງໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳງື່ມ 4 ຢ່າງເປັນທາງການ.

ເຂື່ອນໄຟຟ້ານ້ຳງື່ມ 4 ໄດ້ເລີ່ມລົງມືກໍ່ສ້າງມາແຕ່ທ້າຍປີ 2017 ຄາດວ່າຈະໃຫ້ສຳເລັດພາຍໃນ 66 ເດືອນ ຂ້າງໜ້າມີກຳ ລັງຕິດຕັ້ງ240 (MW) ມີຫົວຈັກງານ 3 ເຄື່ອງ ມູນຄ່າ ການລົງທຶນ 706 ລ້ານໂດລາສະຫະລັດ ໂດຍລັດວິສາຫະກິດໄຟຟ້າລາວເປັນເຈົ້າຂອງໂຄງການ ຊຶ່ງຮັບໜົດກໍ່ສ້າງ ໂດຍບໍລິສັດເຄື່ອງກົນຈັກໜັກແຫ່ງຊາດຈີນຈຳກັດ. ໂຄງການດັ່ງ ກ່າວແມ່ນລັດຖະບານລາວກູ້ເງິນຜ່ອນຜັນຈາກລັດຖະບານຈີນ.